# ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
### ວັນອາທິດ ທີ ພຶສພາ-20, 2007 ( 05-20-2007 )

## ປະເຊີນກັນຊື່ໆໜ້າໃນຄວາມຮັກ:

**ຂໍ້ພຣະຄັມພີໃນບົດຮຽນ:** ມັດທາຍ 18:15-17; ຄາລາເຕັຽ 5:13-15; 6:1-5

**ຄຳຖາມແຫ່ງຊີວິດ:** ຂ້າພະເຈົ້າຈະປະເຊີນຊື່ໆໜ້າກັບຜູ້ໃດຜູ້ນຶ່ງໃນທາງແຫ່ງຄວາມຮັກ ເພື່ອຈະຊ່ອຍແກ້ໄຂປັນຫາຂໍ້ຂັດແຍ້ງໄດ້ຢ່າງໃດ?

**ຄວາມຈິງໃນພຣະຄັມພີ:** ເມື່ອມີການປະເຊີນກັນຊື່ໆໜ້າມັນຈຳເປັນທີ່ຈະຕ້ອງແກ້ໄຂປັນຫາຂໍ້ຂັດແຍ້ງໃຫ້ລຸລ່ວງໄປ, ຄຣິສຕຽນຕ້ອງເວົ້າກັນຊື່ໆໜ້າດ້ວຍຄວາມຮັກ ເພື່ອຮັກສາສາຍສັມພັນ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂື້ນມາເພື່ອຊ່ອຍທ່ານໃຫ້ເປັນຜູ້ສ້າງຄວາມສງົບສຸກທີ່ແທ້ຈິງ ແລະແກ້ໄຂປັນຫາຂໍ້ຂັດແຍ້ງສ່ວນຕົວຂອງແຕ່ລະຄົນໂດຍ:

- ການຮຽນທີ່ຈະໃຫ້ຜົນດີຕໍ່ເຫດການຂັດແຍ້ງກັນເມື່ອທ່ານຫາກປະເຊີນຊື່ໆໜ້າກັບຄົນອື່ນ ໆ; ແລະ
- ການປັບປຸງທີ່ທ່ານສາມາດປະເຊີນຊື່ໆໜ້າກັບຄົນອື່ນ ໆ ເພື່ອຈະບໍ່ໃຫ້ເສັຽສາຍສັມພັນກັນ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ.

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ.
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ທີ່ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ.
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຽັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ.
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ.
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ.

## ບົດນຳ:

1. ຂຽນ "**ການເປັນຜູ້ສ້າງສັນຕິສຸກ**" ໃສ່ກະດານ.
2. ສົນທະນາກັນໃນເຣື່ອງການແກ້ໄຂບັນຫາດ້ວຍຄວາມຮັກ ໂດຍຍົກເອົາຕົວຢ່າງອັນໃດ ອັນນຶ່ງຂື້ນມາ.
3. ເຮັດແນວໃດພວກເຮົາຈຶ່ງສາມາດຫລີກລ້ຽງການຕິດນິສັຍວ່າຕົນເອງດີກວ່າຜູ້ອື່ນ ແກ້ໄຂບັນຫາໃຫ້ຜູ້ອື່ນດ້ວຍຄວາມຮັກ ( ຊຶ່ງເປັນການຂົ່ມເພັ່ງຍໍາໂຕ )

**1. ຂັ້ນຕອນ:** (ມັດທາຍ 18:15-17)

1) ຂໍໃຫ້ນັກຮຽນອາສາສມັກອ່ານ ມັດທາຍ 18:15-17

2) **ຄຳຖາມ:** (1) ຖ້າພີ່ນ້ອງຂອງທ່ານເຮັດຜິດບາບຕໍ່ທ່ານ ໆ ໄດ້ໄປຫາຄົນນັ້ນເວົ້າກັນສອງຕໍ່ສອງແລ້ວບໍ່?

(ພຣະທັມນີ້ໄດ້ແນໃສ່ຄຣິສຕຽນທີ່ແຕກແຍກ ແລະບໍ່ຖືກຕ້ອງປອງດອງກັນ)

(2) ເປັນຫຍັງຈຶ່ງໄປທຳຄວາມໃຈກັນສອງຕໍ່ສອງຢ່າງລັບ ໆ ນັ້ນຈຶ່ງສຳຄັນ?

(3) ຢູ່ໃນຄຣິສຕະຈັກນີ່ງ ໆ ນັ້ນມີຄວາມຂັດແຍ້ງ ແລະບໍ່ຖືກຕ້ອງປອງດອງກັນຈັກຢ່າງ?

(4) ຊຶ່ງແຕ່ກ່ອນເປີດອົກເປີດໃຈຕໍ່ກັນ, ບໍ່ຜິດຂ້ອງຕ້ອງຖຽງກັນ, ບໍ່ເວົ້າຕໍ່ສູ້ກັນ (ສົນທະນາຄົ້ນຄວ້າກັນເບິ່ງ)

3) **ອະທິບາຍ:** ສນັບສນູນກັນໃຫ້ກາຍເປັນຜູ້ສ້າງສັນຕິສຸກ ແລະດຶງກັນອອກຈາກການເປັນຜູ້ສ້າງຄວາມສງົບແບບຈອມປອມ ແລະເປັນຜູ້ທຳລາຍສັນຕິສຸກ.

4) **ຄຳຖາມ:** (1) ຂັ້ນທີສອງຂອງການແກ້ປັນຫາຂອງການບໍ່ຖືກຕ້ອງປອງດອງກັນນັ້ນເຮັດຢ່າງໃດ?

(2) ພຣະເຢຊູບອກໃຫ້ຜູ້ທີ່ເຊື່ອໄປແຈ້ງຄວາມຕໍ່ຄຣິສຕະຈັກນັ້ນໝາຍຄວາມວ່າແນວໃດ?

(3) ໃຫ້ຖືວ່າຄົນນັ້ນເປັນເໝືອນຄົນທີ່ບໍ່ເຊື່ອນັ້ນ ໝາຍຄວາມວ່າແນວໃດ?

(4) ຂັ້ນຕອນທີ່ 4 ນັ້ນພຣະເຢຊູໃຫ້ເຮັດຢ່າງໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ມັດທາຍ 18:15-17

1. ໃນ 4 ຂັ້ນຕອນທີ່ພຣະເຢຊູຊົງບອກໃຫ້ເຮັດນັ້ນທ່ານມີຄວາມຮູ້ສຶກແນວໃດ?
2. ເປັນຫຍັງການເຮັດໄດ້ຢ່າງນີ້ຈຶ່ງເປັນການສຳຄັນ?
3. ແມ່ນສິ່ງໃດທີ່ທຳໃຫ້ທ່ານຍາກໃນໃຈທີ່ຈະເວົ້າກັບພີ່ນ້ອງດ້ວຍໜ້າຕໍ່ໜ້າ?

**2. ຫລັກການ:** ຄາລາເຕັຽ 5:13-15

1) ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມ ຄາລາເຕັຽ 5:13-15

2) **ຄຳຖາມ:** ມະນຸດໃຊ້ສິດເສຣີພາບໃນພຣະເຢຊູຄຣິດຢ່າງໃດຕາມຄວາມປາຖນາຕາມເນື້ອໜັງຂອງເຂົາ?

3) **ອະທິບາຍ:** ຂຽນໃສ່ຄຳວ່າ " **ຮັກເພື່ອນບ້ານເໝືອນຮັກຕົນເອງ** " ໃສ່ກະດານ

4) **ຄຳຖາມ:** 1. ຈະຮັກເພື່ອນບ້ານຂອງທ່ານຢ່າງໃດ?

2. ພຣະເຢຊູໃຫ້ຣະບຽບວິນັຍແກ່ຜູ້ທີ່ຕິດຕາມພຣະອົງເປັນຂັ້ນຕອນຢ່າງໃດແດ່?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** 5:13-15

1. ທ່ານເຫັນດີກັບທຸກ ໆ ຣະບຽບວິນັຍທີ່ຄຣິສຕຽນຖືວ່າເປັນສິດເສຣີພາບໃນການຮັບໃຊ້ໃນຄວາມຮັກນັ້ນບໍ່?
2. ທ່ານຈະຮັກຜູ້ທີ່ມີຄວາມຂັດແຍ້ງກັບທ່ານໄດ້ບໍ່?
3. ທ່ານມີຕົວຢ່າງບໍ່ ເຣື່ອງຄວາມຮັກຕໍ່ຜູ້ທີ່ມີຄວາມຂັດແຍ້ງທີ່ນຳໄປເຖິງຄວາມສັມພັນທີ່ດີໄດ້?

**3. ເປົ້າໝາຍ:** ຄາລາເຕັຽ 6:1-5

1) ຂໍໃຫ້ນັກຮຽນອາສາສມັກອ່ານ ຄາລາເຕັຽ 6:1-5

2) **ຄຳຖາມ:** ທ່ານຈະສາມາດເບິ່ງອອກນິສັຍຂອງຄົນທີ່ມີອະຄະຕິຕໍ່ພີ່ນ້ອງດ້ວຍຄວາມຜິດບາບໄດ້ຢ່າງໃດ?

3) **ອະທິບາຍ:** - ພຣະທັມນັ້ນແທລະໄດ້ນຳພາປັບປຸງແກ້ໄຂທີ່ດີທີ່ສຸດ ຫລືເຮັດໃຫ້ສຳເຣັດ.

- ຖ້າບໍ່ມີເຫດການເກີດຂຶ້ນກໍຈະບໍ່ມີຄວາມຄິດໃໝ່.

4) **ຄຳຖາມ:** (1) ຜູ້ທີ່ມັກນິນທາມີແຕ່ເວົ້າເລື່ອງຂອງຄົນອື່ນນັ້ນຕ້ານກັບອະນາຄົດຂອງທ່ານຢ່າງໃດ?
(2) ຄວາມຜິດບາບຂອງທ່ານໄດ້ຊັກຈູງທ່ານໄປໃນທາງໃດ?
(3) ທ່ານເອົາຊະນະຄວາມຄິດທີ່ຂັດແຍ້ງໄດ້ຢ່າງໃດ?
(4) ເຮັດແນວໃດຈະໃຫ້ຕົວທ່ານເປັນຫ່ວງນຳຜູ້ທີ່ຖືກການກົດຂີ່ຂົ່ມເຫງນັ້ນໄດ້?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ຄາລາເຕັຽ 6:1-5

1. ຂໍ້ຄວາມທັງໝົດນີ້ໄດ້ກ່ຽວພັນຕໍ່ບົດຮຽນອາທິດທີ່ຜ່ານມານັ້ນຢ່າງໃດ?
2. ພຣະຄຳຂໍ້ໃດທີ່ເຮັດໃຫ້ທ່ານເວົ້າແຕ່ຄວາມຈິງ?
3. ທ່ານຮູ້ໃຜແດ່ທີ່ຕ້ອງການພຣະຄຳໜູນໃຈ ຫລືຢາກຮັບເອົາພຣະຄຣິດ?
4. ຄວາມຜິດບາບຂອງທ່ານໄດ້ດຶງທ່ານອອກຈາກການນະມັສການ ແລະອອກຈາກການປະເຊີນກັນຊື່ງໜ້າໃນຄວາມຮັກຫລືບໍ່?
5. ໃນພຣະທັມຄາລາເຕັຽ 6:3, ນັ້ນທາງໃດເປັນທາງທີ່ຫລອກລວງຕົນເອງ?
6. ທ່ານຈະຊັ່ງຊາຕົນເອງໃສ່ກັບຄົນອື່ນໃນການຮັບໃຊ້ຢ່າງໃດ?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ:</u>

- ພຣະເຢຊູໄດ້ຊີ້ງສອນເປັນຂັ້ນເປັນຕອນ ເພື່ອໃຫ້ຊອກຫາທາງແກ້ປັນຫາການຂັດແຍ້ງຣະຫວ່າງຜູ້ທີ່ເຊື່ອກັບຜູ້ທີ່ເຊື່ອ.
- ພຣະຄຳຂອງພຣະເຈົ້າຢືນຢັນຕໍ່ພື້ນຖານຂອງຜູ້ເຊື່ອທີ່ມີຄວາມຂັດແຍ້ງໃຫ້ມີຄວາມຮັກຊຶ່ງກັນແລະກັນ.
- ຜູ້ທີ່ເຊື່ອທັງຫລາຍຈະຕ້ອງຊື່ງໜ້າກັນດ້ວຍຄວາມຮັກເພື່ອຄວາມສັມພັນອັນດີຕໍ່ກັນ ແລະພຣະວິນຍານບໍຣິສຸດຊົງສະຖິດນຳພາພວກເຮົາຢ່າງເຕັມບໍຣິບູນ.

**<u>ສລູບ</u>:**

- ອະທິຖານປິດຫ້ອງຮຽນດ້ວຍການຂໍໃຫ້ພຣະເຈົ້ານຳພາຈິດໃຈຂອງພວກເຮົາໃຫ້ມີຄວາມສາມາດທີ່ຈະປະເຊີນໜ້າກັນໃນຄວາມຮັກ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ. www.lsbf.org. by JH